ສຳນັກງານ ຄຄຊ
ຮັບ ເລກທີ...0767...
ວັນທີ 23 JUL 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ:29 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 19 ກໍລະກົດ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 25-29/06/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,14% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກຍອດຂາຍບ້ານໃໝ່ຂອງສະຫະລັດອາເມລິກາ ໃນເດືອນ 05/2018 ເພີ່ມຂຶ້ນ ຢູ່ໃນລະດັບ 6,7% ຈາກ 3,7% ໃນເດືອນຜ່ານມາ ແລະ ປະຊາຊົນທີ່ຂໍສະຫວັດດີຫວ່າງງານ ໃນອາທິດທີ 16/06/2018 ຫຼຸດລົງ ມາເປັນ 1,70 ລ້ານຄົນ ຈາກ 1,72 ລ້ານຄົນ ໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 18-22/06/2018 | ອາທິດນີ້ 25-29/06/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1661 | 1,1645 | 0,14% |
| ເຢນ/ໂດລາ | 110,01 | 110,64 | -0,49% |
| ບາດ/ໂດລາ | 32,92 | 33,12 | -0,60% |
| ເປໂຊ/ໂດລາ | 53,21 | 53,35 | -0,27% |
| ຣູເປັຍ/ໂດລາ | 14.075,00 | 14.325,00 | -1,75% |
| ໂດລາສິງກະໂປ/ໂດລາ | 1,3564 | 1,3627 | -0,46% |
| ຢວນ/ໂດລາ | 6,4940 | 6,6173 | -1,86% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 6,70% ຈາກ 64,64 ໂດລາ/ບາເຣວ ມາເປັນ 68,97 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງສະຫະລັດອາເມລິກາ ຫຼຸດລົງ 9,89 ລ້ານບາເຣວ ຂອງອາທິດທີ 22/06/2018. ຈາກຫຼຸດລົງ 5,91 ລ້ານບາເຣວໃນອາທິດຜ່ານມາ;

- ລາຄາຄຳຫຼຸດລົງ 1,45% ຈາກ 1.269,48 ໂດລາ/ອອນ ມາເປັນ 1.251,04 ໂດລາ/ອອນ ເນື່ອງຈາກການແຂງຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລໃນຄ່າເງິນ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,24% ແຕ່ແຂງຄ່າຂຶ້ນ 0,25% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 2,38% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 1,42% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 22/06/2018 | | | ອາທິດນີ້ 29/06/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.479,41 | 8.509,50 | 8.494,71 | 8.498,79 | 8.533,30 | 8.515,43 | -0,23% | -0,28% | -0,24% | -2,32% | -2,42% | -2,38% |
| ບາດ | 259,31 | 260,97 | 260,49 | 259,09 | 260,40 | 260,40 | 0,09% | 0,22% | 0,25% | -1,56% | -1,40% | -1,42% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດຫຼຸດລົງ 0,5% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,08%;

- ປະລິມານເງິນ M2 ຫຼຸດລົງ 0,8% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7,9%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (22-28/06/2018) ເຫັນວ່າ ທທກ ຊື້ເງິນໂດລາສຸດທິ 11,74 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 44,05 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 32,31 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 318,94 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 232,97 ລ້ານບາດ ແລະ ຂາຍເງິນບາດໄດ້ 551,91 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາ ເພີ່ມຂຶ້ນ 29,16% ແຕ່ເງິນບາດ ຫຼຸດລົງ 15,85%;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈຳນວນ 11,81 ລ້ານໂດລາ ແລະ ຂາຍເງິນບາດໃຫ້ທະນາຄານທຸລະກິດ ຈຳນວນ 141,80 ລ້ານບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 1,84 ລ້ານໂດລາ ແລະ ເງິນບາດ ຈຳນວນ 64,30 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 15-21/06/2018 | | ອາທິດນີ້ 15-21/06/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **33,65** | **162,79** | **44,05** | **232,97** | **39,62%** | **42,93%** |
| - ທ/ຄທຸລະກິດລັດ | 10,77 | 61,12 | 9,62 | 56,99 | -10,34% | -1,89% |
| - ທ/ຄທຸລະກິດອື່ນໆ | 22,88 | 101,67 | 34,43 | 175,98 | 65,37% | 67,74% |
| 2. ການຂາຍເງິນຕາຕ່າງປະເທດ | **40,14** | **540,23** | **32,31** | **551,91** | **17,19%** | **-28,30%** |
| - ທ/ຄທຸລະກິດລັດ | 19,23 | 183,35 | 14,17 | 226,06 | 3,05% | -11,75% |
| - ທ/ຄທຸລະກິດອື່ນໆ | 20,91 | 356,88 | 18,14 | 325,85 | 31,26% | -36,55% |
| ຊື້-ຂາຍສຸດທິ ທທກ | **-6,49** | **-377,44** | **11,74** | **-318,94** | **194,97%** | **-47,43%** |
| - ຜິດດ່ຽງຊື້-ຂາຍ | -19,29% | -231,86% | 26,65% | -136,90% | 111,34% | -63,22% |
| - ມູນຄ່າການຊື້-ຂາຍ | **73,79** | **703,02** | **76,36** | **784,88** | **29,16%** | **-15,85%** |
| 3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ | **-13,24** | **-46,57** | **-11,81** | **-141,80** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 13,24 | 46,57 | 11,81 | 141,80 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **8,48** | **71,45** | **1,84** | **64,30** | | |
| 5. ທຫລ ກັບ ພາກສ່ວນອື່ນໆ | **-10,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 10,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 06/2018 ຄາດວ່າຈະຢູ່ໃນລະດັບ 2,28% (ຕົວເລກຄາດຄະເນ).

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ເພີ່ມຂຶ້ນ 115,3% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 55,41 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 30,7% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 50,72 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 878 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 55 ສະບັບ ເທົ່າກັບ 5,89% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 329,39 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 159,11 ຕື້ກີບ ເທົ່າກັບ 32,57%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (22-28/06/2018) ມີທັງໝົດ 3.883 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.846 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 63 ຕື້ກີບ ຈາກ 803,23 ຕື້ກີບ ມາເປັນ 866,55 ຕື້ກີບ ເທົ່າກັບ 7,88%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 37 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 52,01 ຕື້ກີບ ຈາກ 22,71 ຕື້ກີບ ມາເປັນ 74,72 ຕື້ກີບ ເທົ່າກັບ 229,01%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 908,18 ຈຸດ ເພີ່ມຂຶ້ນ ຈາກ 904,30 ຈຸດ ຫຼື ເທົ່າກັບ 0,43% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 246.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,26 ຕື້ກີບ ຫຼຸດລົງ 73,24% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 44,99% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ LWPC ແລະ PCD.

➢ ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (ກີບ) | ລາຄາ ປ່ຽນແປງ (%) |
| BCEL | 287.600 | 1.542.205.000 | 5.400 | **191.000** | **1.027.030.000** | **5.400** | -33,59 | -33,41 | - | - |
| EDL-GEN | 727.300 | 3.171.795.000 | 4.350 | **53.400** | **231.790.000** | **4.350** | -92,66 | -92,69 | - | - |
| LWPC | 400 | 3.165.000 | 7.900 | **100** | **865.000** | **8.500** | -75,00 | -72,67 | 600 | 7,59 |
| PTL | 1.500 | 2.400.000 | 1.600 | - | - | **1.600** | -100,00 | -100,00 | - | - |
| SVN | - | - | 2.850 | **400** | **1.120.000** | **2.800** | - | - | -50 | -1,75 |
| PCD | 900 | 1.135.000 | 1.250 | **300** | **395.000** | **1.300** | -66,67 | -65,20 | 50 | 4,00 |
| LCC | 1.500 | 3.375.000 | 2.250 | **1.400** | **3.150.000** | **2.250** | -6,67 | -6,67 | - | - |
| ທັງໝົດ | 1.019.200 | 4.724.075.000 | - | **246.600** | **1.264.350.000** | - | -75,80 | -73,24 | - | - |

## 5. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ: ❶ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ 06/2018, ❷ ພິທີປິດກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ VIII, ❸ ກອງປະຊຸມປຶກສາຫາລືກ່ຽວກັບ Lao Digital Forum ຄັ້ງທີ II ຮ່ວມກັບສະຖານທູດ ສະຫະລັດອາເມລິກາ, ❹ ກອງປະຊຸມກ່ຽວກັບການບັງຄັບໃຊ້ລະບຽບກົດໝາຍວ່າດ້ວຍລະບົບຊຳລະສະສາງ, ❺ ກອງປະຊຸມເປີດກວ້າງລະດົມຄຳເຫັນຕໍ່ຮ່າງບົດແນະນຳ ກ່ຽວກັບການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນຮ່ວມກັບ IFC, ❻ ກອງປະຊຸມເຜີຍແຜ່ວຽກງານກ່ຽວກັບລະບົບການໂອນເງິນແບບທັນທີ (RTGS), ❼ ກອງປະຊຸມໂຄສະນາເຜີຍແຜ່ວຽກງານຕະຫຼາດທຶນ ທີ່ສາຂາ ທຫລ ພາກໃຕ້ ແຂວງຈຳປາສັກ ໃນຫົວຂໍ້ "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນ" ແລະ ❽ ກອງປະຊຸມປຶກສາຫາລືຄົ້ນຄວ້າບັນດາ 40 ຂໍ້ແນະນຳທີ່ຕິດພັນກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

- ທ່ານຜູ້ວ່າການ ທຫລ ພ້ອມດ້ວຍຄະນະເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຢູ່ 04 ແຂວງພາກໃຕ້;

- ສຳເລັດຕ້ອນຮັບການເຂົ້າຢ້ຽມຂໍ່ານັບຄະນະຜູ້ວ່າການ ທຫລ: ❶ ຊ່ຽວຊານໂຄງການຮ່ວມມືແລກປ່ຽນຄວາມຮູ້ທາງດ້ານວິຊາການຂອງ ທະນາຄານ ສ. ເກົາຫຼີ, ❷ ຄະນະປະທານສະພາບໍລິຫານ ທະນາຄານການຄ້າຕ່າງປະເທດຫວຽດນາມ ປະຈຳ ສປປ ລາວ ແລະ ❸ ກຸ່ມບໍລິສັດຈິງເຫົ່ ຈາກ ສປ ຈີນ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ຢ່າງໃກ້ຊິດ;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ➊ ກອງປະຊຸມຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບປັບປຸງ, ➋ ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍລັດຖະບານ ສະບັບປັບປຸງ ແລະ ນິຕິກຳກ່ຽວຂ້ອງ, ➌ ກອງປະຊຸມປຶກສາຫາລື ກ່ຽວກັບທິດທາງໃນການສະໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ການປັບປຸງກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ, ➍ ກອງປະຊຸມປຶກສາຫາລືເພື່ອປັບປຸງຮ່າງຂໍ້ຕົກລົງວ່າດ້ວຍມາດຖານການເຂົ້າເຖິງການບໍລິການທາງດ້ານການເງິນ ແລະ ➎ ກອງປະຊຸມທົບທວນຄືນກ່ຽວກັບການຈັດຕັ້ງປະຕິບັດວຽກງານການນຳໃຊ້ບັນດາທະນາຄານຮ່ວມກັນໃນ ສປປ ລາວ ປະຈຳ 06 ເດືອນຕົ້ນປີ 2018;

- ທ່ານຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະກະກຽມເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຢູ່ ພາກເໜືອ ແຂວງຫຼວງພະບາງ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ